ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມເຜີຍແຜ່
# "ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ), ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ "



ໃນວັນທີ 15 ສິງຫາ 2023 ທີ່ຫ້ອງປະຊຸມສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ ໄດ້ຈັດກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ); ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ຂຶ້ນ. ໂດຍການເປັນປະທານຂອງ ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າກົມຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານແຫ່ງ ສປປ ລາວ; ປະທານຮ່ວມໂດຍ ທ່ານ ອັນທອງ ສິດທິກຸນ ຮອງປະທານສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ, ມີບັນດາຄະນະກົມ, ພະແນກ, ວິຊາການທັງສອງພາກສ່ວນ ແລະ ບັນດາຫົວໜ່ວຍທຸລະກິດຈຳນວນໜຶ່ງເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງການຈັດກອງປະຊຸມໃນຄັ້ງນີ້ ໄດ້ສຸມໃສ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ-ເງິນຕາ ໃນໄລຍະທີ່ປະເທດຊາດພວກເຮົາກຳລັງປະເຊີນກັບສິ່ງທ້າທາຍທີ່ໜັກໜ່ວງຈາກສະພາບການຜັນປ່ຽນ ແລະ ຄວາມບໍ່ສະຖຽນຂອງອັດຕາແລກປ່ຽນ, ບວກກັບຕະຫຼາດເງິນສາກົນບໍ່ມີຄວາມແນ່ນອນ ແລະ ພື້ນຖານເສດຖະກິດພາຍໃນ ສປປ ລາວ ກໍຍັງພົບຄວາມຫຍຸ້ງຍາກ ຊຶ່ງກະທົບຕໍ່ສະເຖຍລະພາບເງິນຕາແຫ່ງຊາດ.



ສຳລັບວຽກງານໃນຂົງເຂດຄຸ້ມຄອງເງິນຕາຕ່າງປະເທດ ຖືວ່າມີຫຼາຍບັນຫາທີ່ທ້າທາຍຫຼາຍສົມຄວນເປັນຕົ້ນການນຳໃຊ້ເງິນຕາຕ່າງປະເທດຢູ່ພາຍໃນ ສປປ ລາວ, ການຄຸ້ມຄອງເງິນຕາຕ່າງປະເທດດ້ານການຄ້າ, ການລົງທຶນ, ໜີ້ສິນຕ່າງປະເທດ ແລະ ການບໍລິການເງິນຕາຕ່າງປະເທດທີ່ບໍ່ໄດ້ຮັບອະນຸຍາດ ຊຶ່ງທັງໝົດນີ້ຖືເປັນບັນຫາທີ່ພວກເຮົາພວມປະເຊີນທີ່ຕ້ອງແກ້ໄຂຢ່າງຮີບດ່ວນ ແລະ ໃຫ້ທັນສະພາບການ; ຈາກນັ້ນ, ໃນທີ່ປະຊຸມຍັງໄດ້ຮັບຟັງການເຜີຍແຜ່ນິຕິກຳໃນການຄຸ້ມຄອງເງິນຕາຕ່າງປະເທດ; ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023 ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ ສະບັບເລກທີ 677/ທຫລ, ລົງວັນທີ 24 ກໍລະກົດ 2023.

ກອງປະຊຸມເຜີຍແຜ່ນິຕິກຳກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ຊຶ່ງໄດ້ດຳເນີນມາເປັນເວລາເຄິ່ງວັນທີ່ເຕັມໄປດ້ວຍບັນຍາກາດອັນຟົດຟື້ນ ແລະ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ຂ່າວ-ພາບ: ສົມພົດ ທຳມະວົງ+ສອນໄຊ ສີຫາເທບ

*ຢູ່ເມືອງລາວໃຊ້ເງິນກີບລາວ*